ຮຽນ:

ອີງໃສ່:

ເລື່ອງ: **ທາງເຂດການສຶກສາມີຄຳສເນີດັ່ງຕໍ່ໄປນີ້:** *[ໃຫ້ໝາຍກາກະບາດທຸກຫ້ອງທີ່ເໝາະສົມ.]*

☐ ການປະເມີນ

☐ ແຜນ IEP/IEP ແກ້ໄຂ

☐ ການກຳນົດບ່ອນຮຽນ

☐ ອື່ນໆ: ________________________________________

*(ໃຫ້ລະບຸ)*

ວັນທີແຈ້ງ:

---

ເມື່ອບໍ່ດົນມານີ້, ທາງເຂດການສຶກສາໄດ້ມີການປຶກສາຫາລືກັນກ່ຽວກັບນັກຮຽນຜູ້ນີ້ແລະ, ໂດຍອີງໃສ່ຄວາມເຫັນຂອງທ່ານເອງ, ຈຶ່ງໄດ້ຮ່າງຄຳສເນີຂຶ້ນມາ. ເຮົາໄດ້ບັນລະຍາຍການດຳເນີນການແລະໄດ້ຊີ້ແຈງເຫດຜົນຂອງເຮົາໃນການດຳເນີນການດັ່ງກ່າວໃນໜ້າທີສອງຂອງບັນທຶກສະບັບນີ້.

ຕາມທີ່ທ່ານຊາບຢູ່ແລ້ວ, ກົດລະບຽບຕ່າງໆທີ່ວ່າດ້ວຍການສຶກສາພິເສດໄດ້ກຳນົດໃຫ້ທ່ານແລະລູກຂອງທ່ານໄດ້ຮັບການປ້ອງກັນ. ທ່ານຈະເຫັນລາຍລະອຽດຕ່າງໆກ່ຽວກັບສິດທິທາງກົດໝາຍຂອງທ່ານໃນປຶ້ມນ້ອຍ *ສິດທິຂອງພໍ່ແມ່ນັກຮຽນ (Parents' Rights Brochure)* ທີ່ແນບມາພ້ອມນີ້, ລວມທັງແຫລ່ງຕ່າງໆທີ່ທ່ານສາມາດຕິດຕໍ່ໄດ້ເພື່ອຈະໄດ້ຮັບຄວາມຊ່ວຍເຫລືອໃນການເຂົ້າໃຈເລື່ອງສິດທິຕ່າງໆຂອງທ່ານ. ທ່ານຄວນທົບທວນປຶ້ມນີ້ຢ່າງລະອຽດຖີ່ຖ້ວນພ້ອມກັບເອກະສານຕ່າງໆທີ່ໄດ້ແນບມາພ້ອມນີ້ກ່ອນທີ່ທ່ານຈະຕັດສິນໃຈໃດໆ.

ພະນັກງານຂອງເຂດການສຶກສາພ້ອມສເມີທີ່ຈະເວົ້າກັບທ່ານຫລືພົບທ່ານເພື່ອປຶກສາຫາລືກັນກ່ຽວກັບສິດທິຂອງທ່ານແລະຂໍ້ສເນີຂອງເຂດການສຶກສາ. ຂໍທ່ານຈົ່ງໂທມາຫາໃນກໍລະນີທີ່ທ່ານມີຂໍ້ຂ້ອງໃຈໃດໆ. ກະລຸນາຕິດຕໍ່ເຮົາໂດຍຜ່ານພະນັກງານຂອງເຂດການສຶກສາທີ່ໄດ້ລະບຸຊື່ຂ້າງລຸ່ມນີ້. ຂໍຂອບໃຈ.

ເນື່ອງຈາກກົດໝາຍໄດ້ບັນຍັດໄວ້ວ່າຕ້ອງມີສຳເນົາທີ່ໄດ້ເຊັນຊື່ໄວ້, ບໍ່ວ່າການຕັດສິນໃຈຂອງທ່ານຈະເປັນຢ່າງໃດ, ທ່ານຈະຕ້ອງເຊັນຊື່ໃສ່ໃນຟອມຄຳຍິນຍອມໃຫ້ມີການປະເມີນ, ຟອມ IEP, ຫລື ຟອມ IEP ແກ້ໄຂ, ແລ້ວສົ່ງຄືນມາຍັງເຮົາ. ກະລຸນາສົ່ງສຳເນົາຄືນໃຫ້ໄວເທົ່າທີ່ຈະໄວໄດ້, ແຕ່ບໍ່ຊ້າກວ່າວັນທີທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້. ຂອບໃຈ.

**ວັນທີທີ່ຕ້ອງສົ່ງເອກະສານຄືນ:**

**ພະນັກງານຂອງເຂດການສຶກສາທີ່ຕ້ອງຕິດຕໍ່:**

**ລາຍລະອຽດໃນການຕິດຕໍ່:**

ສິ່ງທີ່ແນບຕິດ:

☒ *ປຶ້ມນ້ອຍສິດທິຂອງພໍ່ແມ່ນັກຮຽນ (Parents' Rights Brochure)*

☐ ອື່ນໆ:

ອີງໃສ່ :

ວັນທີແຈ້ງ:

***ຄຳແນະນຳສຳລັບພະນັກງານຂອງໂຮງຮຽນ:***

*ຈະຕ້ອງສົ່ງຄຳແຈ້ງສະບັບນີ້ໄປໃຫ້ພໍ່ແມ່ນັກຮຽນໃນພາສາກຳເນີດຂອງເຂົາຫລືໂດຍການສື່ສານໃນພາສາທີ່ພໍ່ແມ່ໃຊ້ຢູ່. ທາງເຂດການສຶກສາຈະຕ້ອງແນ່ໃຈວ່າພໍ່ແມ່ນັກຮຽນເຂົ້າໃຈຂໍ້ຄວາມໃນຄຳແຈ້ງສະບັບນີ້. (ກົດລະບຽບຂອງຣັຖບານກາງ §300.503)*

*ໃຫ້ອະທິບາຍການດຳເນີນການທີ່ໄດ້ສເນີຕໍ່ໄປນີ້ຢ່າງນຶ່ງຫລືຫລາຍກວ່ານັ້ນ: ການປະເມີນຂັ້ນຕົ້ນ, ການປະເມີນຄືນ, ການປະເມີນແບບສູກເສີນ, ການປະເມີນທີ່ຍືດລະຍະເວລາອອກໄປ, ແຜນ IEP, ແຜນ IEP ແກ້ໄຂ, ການກຳນົດບ່ອນຮຽນ* ***<u>(ລວມທັງທີ່ຕັ້ງຂອງບ່ອນຮຽນທີ່ເຈາະຈົງແລະຂໍ້ກຳນົດຕ່າງໆທີ່ກ່ຽວກັບການຂົນສົ່ງ, ຖ້າມີ)</u>****, ການຮຽນຈົບຫລືຂໍ້ສເນີອື່ນໃດທີ່ໃຊ້ໃນການຕັ້ງຕົ້ນຫລືການປ່ຽນແປງການກຳນົດ, ການປະເມີນ, ການກຳນົດບ່ອນຮຽນຫລືການຮັບບໍລິການການສຶກສາພິເສດໂດຍຕອບຄຳຖາມຕໍ່ໄປນີ້:*

1. *ເຂດການສຶກສາສເນີການດຳເນີນງານຫຍັງແນ່?*
2. *ເປັນຫຍັງເຂດການສຶກສາຈຶ່ງສເນີໃຫ້ດຳເນີນການ?*
3. *ໄດ້ມີການພິຈາລະນາແລະປະຕິເສດຂໍ້ສເນີໃດແນ່, ແລະເປັນຫຍັງຂໍ້ສເນີແຕ່ລະຂໍ້ນັ້ນຈຶ່ງໄດ້ຖືກປະຕິເສດ?*
4. *ໄດ້ມີວິທີການປະເມີນ, ການກວດສອບ, ການບັນທຶກຫລືການລາຍງານໃດທີ່ໄດ້ໃຊ້ເປັນເຫດຜົນເພື່ອການດຳເນີນການທີ່ສເນີ?*
5. *ມີຫຍັງອີກແນ່ທີ່ໄດ້ມີຜົນຕໍ່ການຕັດສິນໃຈຂອງເຂດການສຶກສາ?*
6. *ຖ້າມີ, ຂັ້ນຕອນໃດທີ່ສເນີໃຫ້ດຳເນີນການຕໍ່ໄປ?*

---

## ບົດຄວາມອະທິບາຍຂໍ້ສເນີຂອງເຂດການສຶກສາ